ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນາຍົກລັດຖະມົນຕີ ເລກທີ່.....10........./ນຍ

*ນະຄອນຫລວງວຽງຈັນ, ວັນທີ 26 ມັງກອນ 2004*

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງອົງການກວດກາແຫ່ງລັດ

- ອີງຕາມ ໝວດທີ **VII** ມາດຕາ 70 ຂໍ້ 6 ແລະ 7 ຂອງລັດຖະທຳມະນູນແຫ່ງ ສປປ ລາວ.
- ອີງຕາມ ໝວດທີ **II** ມາດຕາ 7 ຂໍ້ 13 ແລະ ໝວດທີ **VII** ມາດຕາ 36 ຂອງກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ.
- ອີງຕາມ ການສະເໜີຂອງທ່ານລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການກວດກາແຫ່ງລັດ ສະບັບເລກທີ 36/ອກລ ລົງວັນທີ 14 ມັງກອນ 2004.

## ນາຍົກລັດຖະມົນຕີ ອອກດຳລັດ

## ໝວດທີ I
## ທີ່ຕັ້ງ ແລະ ພາລະບົດບາດ

ມາດຕາ 1. **ທີ່ຕັ້ງຂອງອົງການກວດກາແຫ່ງລັດ.**

ອົງການກວດກາແຫ່ງລັດ ຊຽນຫຍໍ້ " ອກລ " ເປັນອົງການກວດກາຂອງລັດຖະບານ, ສັງກັດຢູ່ໃນໂຄງປະກອບກົງຈັກການຈັດຕັ້ງຂອງສຳນັກງານນາຍົກລັດຖະມົນຕີ.

ມາດຕາ 2. **ພາລະບົດບາດຂອງອົງການກວດກາແຫ່ງລັດ.**

2.1 ເປັນເສນາທິການຊ່ວຍນາຍົກລັດຖະມົນຕີ ແລະ ລັດຖະບານໃນການຄຸ້ມຄອງບໍລິຫານລັດ ດ້ານວຽກງານກວດກາລັດ.

2.2 ກວດກາການປະຕິບັດໜ້າທີ່ລັດຖະການຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ຫົວໜ່ວຍທຸລະກິດຂອງລັດໃນຂອບເຂດທົ່ວປະເທດ ເພື່ອຕ້ານ ແລະ ສະກັດກັ້ນການລະເມີດລະບຽບກົດໝາຍ, ການສໍ້ລາດບັງຫລວງ ແລະ ປະກົດການຫຍໍ້ທໍ້ຕ່າງໆຢູ່ໃນອົງການບໍລິຫານລັດ.

2.3 ຄົ້ນຄວ້າພິຈາລະນາ ແລະ ແກ້ໄຂຄໍາຮ້ອງທຸກ, ຄໍາສະເໜີຂອງປະຊາຊົນ ກ່ຽວກັບການກະທໍາທີ່ບໍ່ຖືກຕ້ອງຂອງພະນັກງານ-ລັດຖະກອນ ແລະ ຂອງອົງການບໍລິຫານລັດຂັ້ນຕ່າງໆ ບົນພື້ນຖານລະບຽບກົດໝາຍ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່ຂອງອົງການກວດກາແຫ່ງລັດ.**

3.1 ຫັນເອົາແນວທາງ, ນະໂຍບາຍຂອງພັກ ແລະ ລັດຖະບານມາເປັນແຜນຍຸດທະສາດ, ແຜນກໍານົດລວມ ເພື່ອພັດທະນາວຽກງານກວດກາລັດ ໃນແຕ່ລະໄລຍະພ້ອມທັງຈັດຕັ້ງປະຕິບັດພາຍຫລັງທີ່ລັດຖະບານໄດ້ຮັບຮອງເອົາແລ້ວ.

3.2 ສ້າງ ແລະ ຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ, ແຜນການເຄື່ອນໄຫວປະຈໍາປີ, 6 ເດືອນ; 3 ເດືອນ ແລະ ປະຈໍາເດືອນ ບົນພື້ນຖານແຜນຍຸດທະສາດ ແລະ ແຜນກໍານົດລວມທີ່ລັດຖະບານຮັບຮອງແລ້ວ.

3.3 ສ້າງ ແລະ ນໍາສະເໜີລັດຖະບານ ພິຈາລະນາຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງດໍາລັດ ແລະ ລະບອບລະບຽບການຕ່າງໆ ກ່ຽວກັບວຽກງານກວດກາ, ວຽກງານພິຈາລະນາແກ້ໄຂຄໍາຮ້ອງທຸກ ແລະ ຄໍາສະເໜີຂອງປະຊາຊົນ.

3.4 ກໍານົດມາດຕະຖານ, ເງື່ອນໄຂ, ຂັ້ນຕອນ ແລະ ວິທີການກວດກາ, ກວດການ, ການແກ້ໄຂຄໍາຮ້ອງທຸກ-ຄໍາສະເໜີຂອງປະຊາຊົນ.

3.5 ຈັດຕັ້ງ ແລະ ດໍາເນີນການກວດກາ, ກວດການ ການຜັນຂະຫຍາຍປະຕິບັດແນວທາງນະໂຍບາຍ, ກົດໝາຍ ແລະ ການປະຕິບັດພາລະບົດບາດໜ້າທີ່ຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ລັດວິສາຫະກິດ ແລະ ວິສາຫະກິດປະສົມລັດເອກະຊົນພາຍໃນ ແລະ ຕ່າງປະເທດຕາມແຜນການທີ່ໄດ້ກໍານົດ ຫລື ຕາມຄໍາສັ່ງຂອງນາຍົກລັດຖະມົນຕີ ເພື່ອຕ້ານ ແລະ ສະກັດກັ້ນການລ່ວງລະເມີດລະບຽບກົດໝາຍ, ການໃຊ້ອໍານາດເກີນຂອບເຂດ, ການປະລະໜ້າທີ່, ການເລັ່ນເລີ້ໍການປະຕິບັດໜ້າທີ່, ການໃຫ້ ແລະ ຮັບສິນບົນ, ການສໍ້ລາດບັງຫລວງ ແລະ ປະກົດການຫຍໍ້ທໍ້ຕ່າງໆ.

3.6 ສະຫລຸບ, ລາຍງານຜົນການກວດກາ, ກວດການ ພ້ອມທັງສະເໜີກ່ຽວກັບມາດຕະການ ຫລື ວິທີການແກ້ໄຂບັນຫາທີ່ບໍ່ດີເກີດຂຶ້ນຢູ່ໃນການຈັດຕັ້ງທີ່ຖືກກວດກາໃຫ້ລັດຖະບານ ຫລື ນາຍົກລັດຖະມົນຕີຕົກລົງແກ້ໄຂ; ສະຫຼຸບລາຍງານຜົນຂອງການກວດກາ ຕໍ່ຄະນະກໍາມະການກວດກາສູນກາງພັກມີທິດຊີ້ນໍາ; ສົ່ງສໍານວນເອກະສານໃຫ້ອົງການທີ່ມີສິດອໍານາດສັ່ງຟ້ອງ ແລະ ພິຈາລະນາແກ້ໄຂຄະດີຕາມຂະບວນການຍຸຕິທໍາສໍາລັບການຈັດຕັ້ງ ຫລື ບຸກຄົນ ທີ່ລະເມີດກົດໝາຍ.

3.7 ຮັບພິຈາລະນາແກ້ໄຂຄໍາຮ້ອງທຸກ, ຄໍາສະເໜີຂອງປະຊາຊົນກ່ຽວກັບຄໍາຮ້ອງທີ່ພົວພັນເຖິງການກະທໍາທີ່ບໍ່ຖືກຕ້ອງຂອງກະຊວງ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພະນັກງານ-ລັດຖະກອນ; ຄໍາຮ້ອງທຸກ ຫລື ຄໍາສະເໜີ ທີ່ກະຊວງ, ຂະແໜງການ ຫລື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໄດ້ພິຈາລະນາແກ້ໄຂແລ້ວ ແຕ່ຜູ້ຮ້ອງທຸກຍັງບໍ່ພໍໃຈ ເນື່ອງຈາກເຫັນວ່າການແກ້ໄຂນັ້ນບໍ່ເປັນໄປຕາມລະບຽບກົດໝາຍກໍານົດ ແລະ ພິຈາລະນາແກ້ໄຂຄໍາຮ້ອງທຸກ ຫລື ຄໍາສະເໜີ ທີ່ກະຊວງ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນໄດ້ພະຍາຍາມຮ່ວມກັນແກ້ໄຂແລ້ວ ແຕ່ມີຄວາມເຫັນແຕກຕ່າງກັນ.

3.8 ກະຊວງ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນມີໜ້າທີ່ປະຕິບັດຕາມຜົນຂອງການກວດກາ, ການສະເໜີ ຫລື ການຕົກລົງແກ້ໄຂຄຳຮ້ອງທຸກຂອງອົງການກວດກາແຫ່ງລັດ, ກໍລະນີບໍ່ສາມາດປະຕິບັດຕາມໄດ້ ໃຫ້ຫົວໜ້າອົງການກວດກາແຫ່ງລັດນຳສະເໜີຕໍ່ນາຍົກລັດຖະມົນຕີ ເພື່ອຕົກລົງແກ້ໄຂ.

3.9 ຄົ້ນຄວ້າ ແລະ ນຳສະເໜີນາຍົກລັດຖະມົນຕີ ພິຈາລະນາຕົກລົງກ່ຽວກັບການສ້າງຕັ້ງ, ຍຸບເລີກກົງຈັກການຈັດຕັ້ງຂັ້ນກົມ, ຫ້ອງການ ຫລື ທຽບເທົ່າ; ການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ແລະ ອື່ນໆ ຕໍ່ພະນັກງານການນຳຂັ້ນຮອງຫົວໜ້າອົງການ, ຫົວໜ້າກົມ ຫລື ທຽບເທົ່າ.

3.10 ຄົ້ນຄວ້າ ພິຈາລະນາຕົກລົງກ່ຽວກັບການສ້າງຕັ້ງ, ຍຸບເລີກກົງຈັກການຈັດຕັ້ງຂັ້ນພະແນກ, ຂະແໜງ ຫລື ໜ່ວຍງານຂອງກົມ; ການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ແລະ ອື່ນໆຕໍ່ພະນັກງານ-ລັດຖະກອນຂັ້ນຮອງຫົວໜ້າກົມລົງມາຮອດພະນັກງານວິຊາການທົ່ວໄປ ທີ່ສັງກັດຢູ່ໃນການຈັດຕັ້ງຂອງອົງການກວດກາແຫ່ງລັດ.

3.11 ຄຸ້ມຄອງ, ນຳໃຊ້, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນຢ່າງຖືກຕ້ອງຕາມກົດໝາຍວ່າດ້ວຍລັດຖະບານ ແລະ ລະບຽບວ່າດ້ວຍລັດຖະກອນກຳນົດ.

3.12 ຄົ້ນຄວ້າສ້າງແຜນການ ແລະ ຄຸ້ມຄອງ, ນຳໃຊ້ເງິນງົບປະມານ, ພາຫານະອຸປະກອນ ແລະ ຊັບສິນຕ່າງໆທີ່ລັດຖະບານອະນຸມັດໃຫ້ຢ່າງປະຢັດມັດທະຍັດ ແລະ ຖືກຕ້ອງຕາມລະບຽບຫລັກການ.

3.13 ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຫລື ອົງການຈັດຕັ້ງສາກົນຕາມການອະນຸມັດຂອງລັດຖະບານເພື່ອການພັດທະນາ ແລະ ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ດ້ານວຽກງານກວດກາ.

3.14 ເຊັນບົດບັນທຶກ, ບົດສັນຍາກັບຕ່າງປະເທດ ຫລື ອົງການຈັດຕັ້ງສາກົນ ຕາມການຕົກລົງຂອງລັດຖະບານ ເພື່ອຮັບການຊ່ວຍເຫລືອ ຫລື ເຂົ້າຮ່ວມເຄື່ອນໄຫວນຳອົງການຈັດຕັ້ງສາກົນທີ່ ພົວພັນເຖິງຂົງເຂດວຽກງານກວດກາລັດ ຫລື ການຕ້ານການສໍ້ລາດບັງຫລວງ ແລະ ອື່ນໆ.

**ມາດຕາ 4. ຂອບເຂດສິດຂອງອົງການກວດກາແຫ່ງລັດ.**

4.1 ຈັດຕັ້ງດຳເນີນການກວດກາ ກວດການບັນດາອົງການຈັດຕັ້ງບໍລິຫານລັດ, ຕ້ານການລະເມີດລະບຽບກົດໝາຍ, ການສໍ້ລາດບັງຫລວງ ແລະ ປະກົດການຫຍໍ້ທໍ້ຕ່າງໆ; ພິຈາລະນາສະເໜີແກ້ໄຂຄຳຮ້ອງທຸກ, ຄຳສະເໜີຂອງປະຊາຊົນກ່ຽວກັບການກະທຳຂອງພະນັກງານ-ລັດຖະກອນ ແລະ ອົງການບໍລິຫານລັດຂັ້ນຕ່າງໆ ຫົວໜ້າທຸລະກິດຂອງລັດ ຫລື ລັດຮ່ວມທຶນ ບົນພື້ນຖານລະບຽບກົດໝາຍ.

4.2 ຮຽກເຊີນຜູ້ຕາງໜ້າການຈັດຕັ້ງ ຫລື ບຸກຄົນທີ່ເປັນເປົ້າໝາຍກວດກາ ຫລື ເປັນເຈົ້າຂອງຄຳຮ້ອງທຸກມາລາຍງານ, ໃຫ້ຄຳຊີ້ແຈງ, ສະແດງຫລັກຖານ ຫລື ໃຫ້ຂໍ້ມູນທີ່ເປັນຈິງ ເພື່ອຮັບໃຊ້ການກວດກາ ແລະ ພິຈາລະນາຄຳຮ້ອງທຸກ, ຄຳສະເໜີຕ່າງໆ.

4.3 ສະເໜີໄປຍັງກະຊວງ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ຫລື ລັດວິສາຫະກິດຕ່າງໆ ປະກອບພະນັກງານວິຊາການເຂົ້າຮ່ວມໃນຄະນະກວດກາ.

4.4 ອອກຂໍ້ຕົກລົງ, ບົດແນະນຳ, ຄຳສັ່ງ ແລະ ແຈ້ງການ ເພື່ອຜັນຂະຫຍາຍ, ແນະນຳຈັດຕັ້ງປະຕິບັດກົດໝາຍ, ແນວທາງນະໂຍບາຍ ແລະ ລະບຽບການຕ່າງໆ ທີ່ຂັ້ນເທິງວາງອອກກ່ຽວກັບວຽກງານກວດກາ ແລະ ວຽກງານພິຈາລະນາແກ້ໄຂຄຳຮ້ອງທຸກ ແລະ ຄຳສະເໜີຂອງປະຊາຊົນ.

4.5 ສະເໜີໃຫ້ງົດການປະຕິບັດ ຫລື ໃຫ້ພິຈາລະນາຄືນໃໝ່ຜົນການກວດກາຂອງຄະນະກວດກາ ຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ ທີ່ເຫັນວ່າຜົນຂອງການກວດກາ ຫລື ການສະ ຫລຸບຜົນກວດກາບໍ່ເປັນໄປຕາມລະບຽບກົດໝາຍກຳນົດ; ສະເໜີໃຫ້ດັດແປງ ຫລື ຍົກເລີກນິຕິກຳຂອງຂະແໜງການອື່ນ ຫລື ຂອງແຂວງ, ນະຄອນ ທີ່ຂັດກັບລະບຽບຫລັກການກວດກາ, ຂັດກັບລະບຽບກົດໝາຍ.

4.6 ປະສານສົມທົບກັບກະຊວງ, ອົງການທຽບເທົ່າ ຫລື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສັ່ງຢຸດເຊົາວຽກຊົ່ວຄາວ ຫລື ໃຫ້ຍົກຍ້າຍໄປຮັບຜິດຊອບວຽກອື່ນຊົ່ວຄາວ ສຳລັບພະນັກງານ-ລັດຖະກອນຜູ້ທີ່ເຫັນວ່າຖ້າຜູ້ກ່ຽວຍັງເຮັດໜ້າທີ່ຢູ່ບ່ອນນັ້ນ ຈະເປັນການຂັດຂວາງ ຫລື ຈະສ້າງຄວາມຫຍຸ້ງຍາກໃຫ້ແກ່ການກວດກາ ຫລື ໃຫ້ໂຈະການປະຕິບັດຂໍ້ຕົກລົງຍົກຍ້າຍພະນັກງານ-ລັດຖະກອນໄວ້ຊົ່ວຄາວ ເມື່ອເຫັນວ່າຖ້າຍົກຍ້າຍຜູ້ກ່ຽວແລ້ວຈະເຮັດໃຫ້ການກວດກາ ພົບຄວາມຫຍຸ້ງຍາກ.

4.7 ພົວພັນ, ປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອກະກຽມ ແລະ ດຳເນີນການກວດກາໃຫ້ໄດ້ຮັບຜົນດີ; ອີງໃສ່ຜົນການກວດສອບບັນຊີຂອງອົງການກວດສອບບັນຊີແຫ່ງລັດ, ໃຫ້ອົງການກວດກາແຫ່ງລັດລົງເລິກກວດກາຕື່ມ ເພື່ອຊອກເຫັນການກະທຳຜິດກົດໝາຍວ່າດ້ວຍງົບປະມານ, ກົດໝາຍວ່າດ້ວຍການບັນຊີ ແລະ ລະບອບລະບຽບການອື່ນໆ ທີ່ລັດວາງອອກ.

4.8 ສະເໜີຕໍ່ຂັ້ນເທິງ ແລະ ອົງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຄຳຮ້ອງທຸກ, ຄຳສະເໜີຂອງປະຊາຊົນ ແລະ ຕົກລົງແກ້ໄຂຜົນຂອງການກວດກາໃຫ້ທັນການ.

4.9 ສະເໜີຕໍ່ຄະນະພັກ ແລະ ອົງການປົກຄອງທີ່ກ່ຽວຂ້ອງລົງວິໄນ ແລະ ນຳໃຊ້ມາດຕະການທາງບໍລິຫານຕໍ່ຜູ້ກະທຳຜິດ, ພ້ອມທັງເກັບກູ້ເອົາຊັບສົມບັດທີ່ຖືກຕົກເຮ່ຍເສຍຫາຍນັ້ນຄືນມາໃຫ້ລັດ ແລະ ໃຫ້ໃຊ້ແທນຄ່າເສຍຫາຍນັ້ນທັງໝົດ.

4.10 ເຂົ້າຮ່ວມກອງປະຊຸມ ຂອງລັດຖະບານຕາມການເຊີນ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບບຸກຄະລາກອນ.**

5.1 ອົງການກວດກາແຫ່ງລັດ ປະກອບດ້ວຍ ຫົວໜ້າ 1 ທ່ານ ແລະ ຮອງຫົວໜ້າຈຳນວນໜຶ່ງ; ຊັ້ນຕຳແໜ່ງຂອງຫົວໜ້າອົງການ ຫລື ຮອງຫົວໜ້າອົງການຈະຖືກກຳນົດແຈ້ງຢູ່ໃນດຳລັດ ຫລື ຂໍ້ຕົກລົງແຕ່ງຕັ້ງ ເພື່ອໃຫ້ສອດຄ່ອງກັບສະພາບ ແລະ ຈຸດພິເສດຂອງອົງການ ໃນແຕ່ລະໄລຍະ.

5.2 ອົງການກວດກາແຫ່ງລັດ ຍັງປະກອບມີຫົວໜ້າ, ຮອງຫົວໜ້າຫ້ອງການ; ຫົວໜ້າ, ຮອງຫົວໜ້າກົມ; ຫົວໜ້າ, ຮອງຫົວໜ້າພະແນກ ແລະ ພະນັກງານລັດຖະກອນທີ່ສັງກັດຢູ່ໃນໂຄງປະກອບກົງຈັກຂອງອົງການກວດກາແຫ່ງລັດ.

5.3 ການແຕ່ງຕັ້ງ, ເລື່ອນຊັ້ນ-ຂັ້ນ, ປົດຕຳແໜ່ງບຸກຄະລາກອນຂອງອົງການກວດກາແຫ່ງລັດ ແມ່ນປະຕິບັດຕາມກົດໝາຍວ່າດ້ວຍລັດຖະບານ ແລະ ລະບຽບລັດຖະກອນກຳນົດ.

**ມາດຕາ 6. ໂຄງປະກອບກົງຈັກການຈັດຕັ້ງ ປະກອບດ້ວຍ.**

- ຫ້ອງການ.
- ກົມກວດກາ ລັດບໍລິຫານ.
- ກົມກວດກາ ເສດຖະກິດ.
- ກົມຄົ້ນຄວ້າ ຄຳຮ້ອງທຸກ ແລະ ຄຳສະເໜີຂອງປະຊາຊົນ.

**ມາດຕາ 7. ການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່.**

ມອບໃຫ້ຫົວໜ້າອົງການກວດກາແຫ່ງລັດ ເປັນຜູ້ກຳນົດພາລະບົດບາດ, ສິດ, ໜ້າທີ່ ແລະ ໂຄງປະກອບກົງຈັກການຈັດຕັ້ງຂອງຫ້ອງການ ແລະ ບັນດາກົມທີ່ຂຶ້ນກັບ.

**ມາດຕາ 8. ການຊີ້ນຳດ້ານວິຊາການ.**

ອົງການກວດກາແຫ່ງລັດ ຊີ້ນຳດ້ານວິຊາການໃຫ້ແກ່ກົງຈັກການຈັດຕັ້ງທີ່ເຄື່ອນໄຫວເຮັດບົດບາດກວດກາລັດຢູ່ໃນບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ.

**ມາດຕາ 9. ງົບປະມານ.**

ອົງການກວດກາແຫ່ງລັດ ແມ່ນຫົວໜ່ວຍງົບປະມານຂັ້ນ 1 ເພື່ອສະດວກໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດຂອງຕົນ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 10. ອົງການກວດກາແຫ່ງລັດ ເຄື່ອນໄຫວຕາມຫລັກການດັ່ງນີ້ :**

10.1 ອົງການກວດກາແຫ່ງລັດ ເຄື່ອນໄຫວຕາມຫລັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍປະຕິບັດຕາມສຽງສ່ວນຫລາຍ, ບຸກຄົນຂຶ້ນກັບການຈັດຕັ້ງ, ຂັ້ນລຸ່ມຂຶ້ນກັບຂັ້ນເທິງ, ປະຕິບັດຕາມລະບອບຫົວໜ້າດຽວ.

10.2 ປະຕິບັດລະບອບປະຊຸມສາມັນປະຈຳເດືອນ, ງວດ ແລະ ປະຈຳປີຢ່າງປົກກະຕິ ແລະ ລາຍງານສ່ອງແສງໃຫ້ຂັ້ນເທິງເປັນປະຈຳ.

10.3 ການເຄື່ອນໄຫວ ຕ້ອງມີແຜນການປະຈຳເດືອນ, 6 ເດືອນ ແຜນການປີ ແລະ ມີການສະຫລຸບ ຖອດຖອນບົດຮຽນ.

10.4 ປະຕິບັດລະບອບລາຍງານ, ຂໍຄຳເຫັນຈາກລັດຖະບານ, ນາຍົກລັດຖະມົນຕີ ແລະ ຄະນະກຳມະການກວດກາສູນກາງພັກ; ເອົາໃຈໃສ່ຊີ້ນຳຂັ້ນລຸ່ມຈັດຕັ້ງປະຕິບັດ ແລະ ເມື່ອມີບັນຫາຕ້ອງລາຍງານ ຫລື ແກ້ໄຂທັນເວລາ.

10.5 ປະຕິບັດລະບອບປະສານງານປົກກະຕິກັບໄອຍະການປະຊາຊົນ, ສານປະຊາຊົນ, ເຈົ້າໜ້າທີ່ຕຳຫລວດ; ອົງການກວດສອບບັນຊີແຫ່ງລັດ, ຫ້ອງການປັບປຸງທຸລະກິດ, ກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ.

## ໝວດທີ V
## ຂໍ້ບັນຍັດສຸດທ້າຍ

**ມາດຕາ 11. ກາປະທັບ**

ອົງການກວດກາແຫ່ງລັດ, ຫ້ອງການ ແລະ ບັນດາກົມ ມີກາປະທັບສະເພາະສຳລັບນຳໃຊ້ເຂົ້າໃນວຽກງານລັດຖະການ.

**ມາດຕາ 12. ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການກວດກາແຫ່ງລັດເປັນຜູ້ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ມີປະສິດທິຜົນ.

**ມາດຕາ 13. ການຮັບຮູ້**

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆໃນຂອບເຂດ

**ມາດຕາ 14. ຜົນສັກສິດ**

ດຳລັດສະບັບນີ້ ປ່ຽນແທນດຳລັດເລກທີ 98/ ນຍ ລົງວັນທີ 30 ພຶດສະພາ 2001 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ